**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ
ຄະນະປະຈຳ

ເລກທີ 01 /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 18/01/23

# ຄຳແນະນຳ
## ຂອງຄະນະປະຈຳສະພາແຫ່ງຊາດ
## ກ່ຽວກັບການຈັດຕັ້ງຜັນຂະຫຍາຍ ແລະ ເຜີຍແຜ່ຜົນສຳເລັດ
## ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX

- ອີງຕາມ ກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງ ປີ 2020, ມາດຕາ 33 ກ່ຽວກັບສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ;
- ອີງຕາມ ມະຕິຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 263/ຄປຈ, ລົງວັນທີ 28 ຕຸລາ 2022 ວ່າດ້ວຍການດຳເນີນກອງປະຊຸມສະພາແຫ່ງຊາດ;
- ອີງຕາມ ມະຕິຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການດຳເນີນກອງປະຊຸມສະພາແຫ່ງຊາດ ສະບັບປັບປຸງ 2021, ມາດຕາ 6 ກ່ຽວກັບສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ.
- ອີງຕາມ ຜົນຂອງການຈັດຕັ້ງ ແລະ ການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ນັບແຕ່ວັນທີ 05-30 ທັນວາ 2022.

ເພື່ອຮັບປະກັນການຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ຜົນສຳເລັດ ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ທົ່ວເຖິງ, ມີປະສິດທິຜົນ, ຄະນະປະຈຳສະພາແຫ່ງຊາດ ອອກຄຳແນະນຳ ດັ່ງນີ້:

## I. <u>ຈຸດປະສົງລະດັບຄາດໝາຍ</u>

1. ແນໃສ່ຮັບປະກັນການຈັດຕັ້ງຜັນຂະຫຍາຍ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ວ່ອງໄວ, ທົ່ວເຖິງ ແລະ ມີປະສິດທິຜົນ;

2. ແນໃສ່ຮັບປະກັນໃຫ້ຖັນແຖວພະນັກງານ, ສະມາຊິກພັກ, ລັດຖະກອນ, ທະຫານ, ຕຳຫຼວດ, ກຳມະກອນ, ນັກຮຽນຮູ້, ປັນຍາຊົນ ແລະ ປະຊາຊົນລາວບັນດາເຜົ່າຮັບຮູ້ ແລະ ເຊື່ອມຊຶມ ຜົນສຳເລັດການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ເຂົ້າຮ່ວມຈັດຕັ້ງປະຕິບັດໃຫ້ເກີດເປັນໝາກຜົນຕົວຈິງ;

3. ເພື່ອເປັນບ່ອນອີງໃຫ້ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ ໃນການເຄື່ອນໄຫວໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຮັບປະກັນທາງດ້ານເນື້ອໃນ, ຂັ້ນຕອນ, ວິທີການ ແລະ ການສະຫຼຸບລາຍງານຜົນໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ;

4. ເພື່ອເຮັດໃຫ້ການເຜີຍແຜ່ເນື້ອໃນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຕິດພັນກັບການລາຍງານການປະຕິບັດໜ້າທີ່ຂອງສະພາແຫ່ງຊາດ ກໍຄືສະມາຊິກສະພາແຫ່ງຊາດ ໃຫ້ຜູ້ມີສິດເລືອກຕັ້ງໄດ້ຮັບຊາບຕາມກົດໝາຍໄດ້ກຳນົດ ແລະ ຮັບຟັງຄຳຄິດຄຳເຫັນຂອງພໍ່ແມ່ປະຊາຊົນກ່ຽວກັບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຊຶ່ງຈະເປັນຂໍ້ມູນໃນການປະສານສົມທົບກັບພາກສ່ວນກ່ຽວຂ້ອງ.

## II. ເນື້ອໃນຈັດຕັ້ງຜັນຂະຫຍາຍ ແລະ ເຜີຍແຜ່

ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ດຳເນີນແຕ່ວັນທີ 5-30 ທັນວາ 2022 ທີ່ເຕັມໄປດ້ວຍຄວາມຮັບຜິດຊອບສູງຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ໃນຖານະເປັນຕົວແທນໃຫ້ແກ່ສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າໃນທົ່ວປະເທດ ຊຶ່ງໄດ້ພິຈາລະນາ 26 ເນື້ອໃນ ແລະ ອອກເປັນມະຕິກອງປະຊຸມສະພາແຫ່ງຊາດ ຈຳນວນ 22 ສະບັບ ມີລາຍລະອຽດດັ່ງນີ້:

**1. <u>ການຮັບຮອງເອົາວຽກງານຂົງເຂດລັດຖະບານມີ:</u>**

1) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023 (ເລກທີ 82/ສພຊ ລົງວັນທີ 30 ທັນວາ 2022);

2) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021, ຄາດຄະເນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023 (ເລກທີ 63/ສພຊ, ລົງວັນທີ 9 ທັນວາ 2022);

3) ມະຕິ ກອງປະຊຸມສະພາແຫ່ງຊາດວ່າດ້ວຍການຮັບຮອງເອົາການສະເໜີຂໍພັກການ-ຮັບອຸດໜູນບຳນານຂອງທ່ານນາຍົກລັດຖະມົນຕີ ແຫ່ງ ສປປ ລາວ (ເລກທີ 83 /ສພຊ, ລົງວັນທີ 30 ທັນວາ 2022);

4) ມະຕິ ກອງປະຊຸມສະພາແຫ່ງຊາດວ່າດ້ວຍການເລືອກຕັ້ງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ຜູ້ໃໝ່ (ເລກທີ 84 /ສພຊ, ລົງວັນທີ 30 ທັນວາ 2022).

**2. <u>ການຮັບຮອງເອົາວຽກງານຂົງເຂດກວດສອບແຫ່ງລັດ ແລະ ກວດກາແຫ່ງລັດມີ:</u>**

1) ມະຕິ ກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງອົງການກວດສອບແຫ່ງລັດ (ເລກທີ 76/ສພຊ, ລົງວັນທີ 30 ທັນວາ 2022);

2) ມະຕິ ກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງອົງການກວດກາແຫ່ງລັດ (ເລກທີ 77/ສພຊ, ລົງວັນທີ 30 ທັນວາ 2022).

**3. <u>ການຮັບຮອງເອົາວຽກງານຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດມີ:</u>**

1) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງສານປະຊາຊົນສູງສຸດ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງວຽກງານປະຈຳປີ 2023 (ເລກທີ 78/ສພຊ, ລົງວັນທີ 30 ທັນວາ 2022);

2) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງວຽກງານປະຈຳປີ 2023 (ເລກທີ 79/ສພຊ, ລົງວັນທີ 30 ທັນວາ 2022);

**4. <u>ການຮັບຮອງເອົາວຽກງານຂອງສະພາແຫ່ງຊາດມີ:</u>**

1) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານຂອງປະຈຳປີ 2022ແລະ ທິດທາງວຽກງານປະຈຳປີ 2023 ຂອງສະພາແຫ່ງຊາດ (ເລກທີ 80/ສພຊ, ລົງວັນທີ 30 ທັນວາ 2022);

2) ມະຕິ ກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງຮັບຮອງເອົາບົດລາຍງານ ກ່ຽວກັບການປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ ແຕ່ປີ 2023-2025 (ເລກທີ 81/ສພຊ, ລົງວັນທີ 30 ທັນວາ 2022).

**5. ການຮັບຮອງເອົາກົດໝາຍ 12 ສະບັບຄື:**

1) ມະຕິ ກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍທະນາຍຄວາມ (ປັບປຸງ) (ເລກທີ 64/ສພຊ, ລົງວັນທີ 29 ທັນວາ 2022);

2) ມະຕິ ກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍທະບຽນສານ (ປັບປຸງ) (ເລກທີ 65/ສພຊ, ລົງວັນທີ 29 ທັນວາ 2022);

3) ມະຕິ ກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍການກວດກາລັດ (ປັບປຸງ) (ເລກທີ 66/ສພຊ, ລົງວັນທີ 29 ທັນວາ 2022);

4) ມະຕິ ກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ (ປັບປຸງ) (ເລກທີ 67/ສພຊ, ລົງວັນທີ 29 ທັນວາ 2022);

5) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍພິພິທະພັນ (ສ້າງໃໝ່) (ເລກທີ 68/ສພຊ, ລົງວັນທີ 29 ທັນວາ 2022);

6) ມະຕິ ກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່ (ປັບປຸງ) (ເລກທີ 69/ສພຊ, ລົງວັນທີ 29 ທັນວາ 2022);

7) ມະຕິ ກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍການກວດສອບແຫ່ງລັດ (ປັບປຸງ) (ເລກທີ 70/ສພຊ, ລົງວັນທີ 29 ທັນວາ 2022);

8) ມະຕິ ກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍການທາງນໍ້າ (ສ້າງໃໝ່) (ເລກທີ 71/ສພຊ, ລົງວັນທີ 29 ທັນວາ 2022);

9) ມະຕິ ກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍວິຊາການໄອຍະການທະຫານ (ປັບປຸງ) (ເລກທີ 72/ສພຊ ລົງວັນທີ 29 ທັນວາ 2022);

10) ມະຕິ ກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ (ປັບປຸງ) (ເລກທີ 73 /ສພຊ, ລົງວັນທີ 29 ທັນວາ 2022);

11) ມະຕິ ກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍໜັງສືຜ່ານແດນ (ສ້າງໃໝ່) (ເລກທີ 74/ສພຊ, ລົງວັນທີ 29 ທັນວາ2022);

12) ມະຕິ ກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍວິສາຫະກິດ (ປັບປຸງ) (ເລກທີ 75/ສພຊ, ລົງວັນທີ 29 ທັນວາ2022).

## III. ຄວາມຮັບຜິດຊອບຂອງກົງຈັກການຈັດຕັ້ງສະພາແຫ່ງຊາດ

**1. ບັນດາກໍາມາທິການສະພາແຫ່ງຊາດ**

1) ກຳມາທິການກົດໝາຍ ເປັນເຈົ້າການປະສານສົມທົບ ກັບບັນດາກຳມາທິການ ແລະ ພາກສ່ວນກ່ຽວຂ້ອງ ຊຸກຍູ້ການປັບປຸງ, ຮຽບຮຽງບັນດາເນື້ອໃນກົດໝາຍທີ່ໄດ້ຮັບຮອງເອົາຢູ່ກອງປະຊຸມຄັ້ງນີ້ ເພື່ອຮັບປະກັນການປະກາດໃຊ້ ທັນເວລາຕາມກົດໝາຍກຳນົດ. ພ້ອມກັນນີ້, ໃຫ້ສົມທົບກະກຽມຄວາມພ້ອມບັນດາຮ່າງກົດໝາຍ ທີ່ຈະນຳເຂົ້າຜ່ານກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ທັນເວລາ;

2) ບັນດາກຳມາທິການ ເປັນເຈົ້າການຄົ້ນຄວ້າເນື້ອໃນຕ່າງໆ ທີ່ກອງປະຊຸມໄດ້ພິຈາລະນາຮັບຮອງແລ້ວ ເພື່ອຜັນຂະຫຍາຍເຂົ້າໃນແຜນການເຄື່ອນໄຫວຂອງຕົນ ໂດຍສະເພາະ ການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ໃຫ້ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້;

3) ບັນດາກຳມາທິການ, ສະມາຊິກສະພາແຫ່ງຊາດ ແລະ ພາກສ່ວນກ່ຽວຂ້ອງ ເປັນເຈົ້າການປະສານສົມທົບກັບຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອຈັດຕັ້ງການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ສັງຄົມໄດ້ຮັບຮູ້ຢ່າງກວ້າງ

ຂວາງ ແລະ ເລິກເຊິ່ງ. ພ້ອມດຽວກັນນັ້ນ, ກໍເອົາໃຈໃສ່ຕິດຕາມ, ສະຫຼຸບຜົນສຳເລັດ ເພື່ອລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຕາມລະບຽບການ.

**2. ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ**

1) ເປັນເຈົ້າການເກັບກຳ, ສັງລວມແຜນການລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຂອງບັນດາທ່ານ ສະມາຊິກສະພາແຫ່ງຊາດ ທີ່ປະຈຳຢູ່ສູນກາງ ເພື່ອຄົ້ນຄວ້າ ແລະ ນຳສະເໜີຄະນະປະຈຳສະພາແຫ່ງຊາດ ພິຈາລະນາຕົກລົງ;

2) ເປັນໃຈກາງປະສານສົມທົບກັບຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະພາປະຊາຊົນຂັ້ນແຂວງ ແລະ ພາກສ່ວນກ່ຽວຂ້ອງ ໃນການເກັບກຳ, ສະຫຼຸບສັງລວມຜົນການລົງໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເພື່ອລາຍງານຄະນະປະຈຳສະພາແຫ່ງຊາດ ທັນຕາມເວລາທີ່ກຳນົດ;

3) ຕິດຕາມ, ຊຸກຍູ້ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ ແລະ ພາກສ່ວນກ່ຽວຂ້ອງ ໃນການແກ້ໄຂຄຳສະເໜີຂອງປະຊາຊົນ ທີ່ເກັບກຳໄດ້ຈາກການລົງໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເພື່ອໃຫ້ຊີ້ແຈງ ແລະ ຕິດຕາມຊຸກຍູ້ການແກ້ໄຂເປັນລາຍລັກອັກສອນແກ່ປະຊາຊົນ;

4) ບັນດາກຳມາທິການ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ ທີ່ຕິດພັນກັບຂົງເຂດວຽກງານຕົນຮັບຜິດຊອບ ໃນການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ຄົບຖ້ວນ ແລະ ທົ່ວເຖິງ, ພາຍຫຼັງສຳເລັດໃຫ້ລາຍງານເປັນລາຍລັກອັກສອນຕໍ່ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ເພື່ອຊາບ.

**3. ຄະນະເລຂາທິການສະພາແຫ່ງຊາດ**

1) ສ້າງເງື່ອນໄຂອຳນວຍຄວາມສະດວກຮອບດ້ານໃຫ້ແກ່ສະມາຊິກສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ໃນການລົງເຄື່ອນໄຫວ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ກວ້າງຂວາງ ແລະ ທົ່ວເຖິງ;

2) ເປັນເຈົ້າການປະສານສົມທົບກັບກັບກຳມາທິການຕ່າງໆ ສັງລວມເນື້ອໃນກອງປະຊຸມສະພາແຫ່ງຊາດ ເພື່ອສ້າງເປັນເອກະສານຄູ່ມືໃຫ້ແກ່ສະມາຊິກສະພາແຫ່ງຊາດ ລົງໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX;

3) ສ້າງແຜນການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ 2023 ຂອງຄະນະປະຈຳສະພາແຫ່ງຊາດ ດ້ວຍການຜັນຂະຫຍາຍຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເປັນແຜນການລາຍລະອຽດເພື່ອຈັດຕັ້ງປະຕິບັດ, ຮັບປະກັນການກະກຽມເນື້ອໃນຮອບດ້ານໃຫ້ແກ່ການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ມີປະສິດທິຜົນ.

**4. ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ**

1) ເອົາໃຈໃສ່ເກັບກຳ ແລະ ສັງລວມຜົນສຳເລັດຂອງການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ລາຍງານຕໍ່ຄະນະປະຈຳພັກແຂວງ, ນະຄອນຫຼວງ ຮັບຊາບ ແລະ ຊີ້ນຳໃນການຈັດຕັ້ງຜັນຂະຫຍາຍ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມດັ່ງກ່າວ ຕິດພັນກັບເອກະສານອື່ນໆ;

2) ຄົ້ນຄວ້າເນື້ອໃນຕ່າງໆ ທີ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຮັບຮອງເອົາ ເພື່ອຜັນຂະຫຍາຍເຂົ້າໃນການແຜນການເຄື່ອນໄຫວແຕ່ລະດ້ານ ໃຫ້ສອດຄ່ອງຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ແລະ ສອດຄ່ອງກັບສະພາບການຕົວຈິງ ໃນເຂດເລືອກຕັ້ງຂອງຕົນ;

3) ເອົາໃຈໃສ່ປະສານສົມທົບ ກັບຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເພື່ອວາງແຜນການຜັນຂະຫຍາຍ

ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຕິດພັນກັບຜົນສຳເລັດກອງປະຊຸມສະໄໝສາມັນຂອງສະພາປະຊາຊົນຂັ້ນແຂວງ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້;

4) ເປັນເຈົ້າການປະສານສົມທົບກັບ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ດຳເນີນກອງປະຊຸມເຜີຍແຜ່ແນະນຳກ່ຽວກັບຜົນສຳເລັດກອງປະຊຸມສະພາແຫ່ງຊາດຄັ້ງນີ້ ໃຫ້ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ອົງການຈັດຕັ້ງກ່ຽວຂ້ອງ. ສຳລັບບ້ານທີ່ຢູ່ຫ່າງໄກ ກໍໃຫ້ນຳໃຊ້ວິທີການຕ່າງໆ ເພື່ອເຮັດໃຫ້ການເຜີຍແຜ່ຜົນສຳເລັດກອງປະຊຸມສະພາແຫ່ງຊາດ ໄດ້ໄປຮອດໄປເຖິງປະຊາຊົນ ໃນຂອບເຂດທົ່ວປະເທດ.

### 5. ສະມາຊິກສະພາແຫ່ງຊາດ

1) ເປັນເຈົ້າການຄົ້ນຄວ້າ ແລະ ກຳແໜ້ນເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເພື່ອເຜີຍແຜ່ໃຫ້ສອດຄ່ອງ ແລະ ແທດຄືວຈິງກັບແຕ່ລະເປົ້າໝາຍ ແລະ ສະພາບຂອງແຕ່ລະເຂດເລືອກຕັ້ງ ຕິດພັນກັບການເກັບກຳຂໍ້ມູນ, ສະພາບການພົ້ນເດັ່ນ ຢູ່ເຂດເລືອກຕັ້ງຂອງຕົນ ເພື່ອປະສານສົມທົບກັບພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂ ແລະ ແຈ້ງຕອບຜົນການແກ້ໄຂໃຫ້ແກ່ປະຊາຊົນ;

2) ບັນດາທ່ານ ສະມາຊິກສະພາແຫ່ງຊາດຄອບຕຳແໜ່ງ ທີ່ປະຈຳການຢູ່ຂະແໜງການຕ່າງໆ ທັງສູນກາງ ແລະ ເຂດເລືອກຕັ້ງ ເປັນເຈົ້າການລາຍງານໃຫ້ແກ່ຄະນະນຳທີ່ຕົນສັງກັດ ເພື່ອອະນຸຍາດໃຫ້ລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຢູ່ໃນອົງການຈັດຕັ້ງຂອງຕົນ ແລະ ໃນເຂດເລືອກຕັ້ງຂອງຕົນ. ພາຍຫຼັງສຳເລັດໃຫ້ລາຍງານເປັນລາຍລັກອັກສອນຕໍ່ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ເພື່ອສັງລວມລາຍງານການເຜີຍແຜ່ໃຫ້ຄະນະປະຈຳສະພາແຫ່ງຊາດ ໃຫ້ທັນຕາມກຳນົດເວລາ;

3) ບັນດາທ່ານ ສະມາຊິກສະພາແຫ່ງຊາດ ທີ່ປະຈຳການຢູ່ສູນກາງ ພາຍຫຼັງທີ່ໄດ້ຮັບແຜນການໃດສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ໃຫ້ເຮັດໜັງສືສະເໜີຫາທ່ານ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ເພື່ອຄົ້ນຄວ້າ ແລະ ລາຍງານຄະນະປະຈຳສະພາແຫ່ງຊາດ ພິຈາລະນາອະນຸມັດ.

### 6. ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ

1) ເປັນເຈົ້າການເກັບກຳ, ສຳເນົາບັນດາເອກະສານກອງປະຊຸມສະພາແຫ່ງຊາດ ເພື່ອສັງລວມເປັນຂໍ້ມູນໄວ້ຢູ່ຖານຂໍ້ມູນເອເລັກໂຕຣນິກຂອງສະພາແຫ່ງຊາດ ແລະ ສະໜອງໃຫ້ແກ່ພາກສ່ວນຕ່າງໆ ເພື່ອນຳໃຊ້ເຂົ້າໃນວຽກງານ;

2) ຈັດຕັ້ງການແກະຖອດເທັບຂອງສະມາຊິກສະພາແຫ່ງຊາດ, ຜູ້ແທນກອງປະຊຸມ ເພື່ອສະໜອງເປັນຂໍ້ມູນໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ, ສະມາຊິກສະພາແຫ່ງຊາດ ໃນການຕິດຕາມກວດກາການປະຕິບັດໜ້າທີ່ຂອງເປົ້າໝາຍດັ່ງກ່າວ;

3) ຄົ້ນຄວ້າສັງລວມບັນຫາຕ່າງໆ ກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດຂອງສະພາແຫ່ງຊາດ ເພື່ອສ້າງເປັນວິທະຍາສາດ ແລະ ສະຫຼຸບເປັນບົດຮຽນ, ທິດສະດີໃຫ້ແກ່ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະມາຊິກສະພາແຫ່ງຊາດ;

## IV. <u>ຮູບການ, ວິທີການ, ເປົ້າໝາຍ ແລະ ກຳນົດເວລາ</u>

### 1. ຮູບການເຜີຍແຜ່

ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ປະສານສົມທົບກັບຄະນະປະຈຳສະພາປະຊາຊົນຂັ້ນແຂວງ ສ້າງແຜນການເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ IX ໃຫ້ຕິດພັນກັບການເຜີຍແຜ່ຜົນສຳເລັດ ກອງປະຊຸມສະໄໝສາມັນຂອງສະພາປະຊາຊົນຂັ້ນແຂວງ ໂດຍກຳນົດການປະກອບຄະນະຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຕາມຄວາມເໝາະສົມ ແລະ ສອດຄ່ອງກັບສະພາບຕົວຈິງແຕ່ລະທ້ອງຖິ່ນ. ນອກຈາກນັ້ນ, ຄະນະສະມາຊິກສະພາແຫ່ງຊາດ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການເຜີຍແຜ່ຜົນສຳເລັດກອງປະຊຸມສະພາແຫ່ງຊາດ ຜ່ານສື່ມວນຊົນປະເພດຕ່າງໆ ຂອງສູນກາງ ແລະ ທ້ອງຖິ່ນ ເພື່ອໃຫ້ສັງຄົມຮັບຮູ້ຢ່າງກວ້າງຂວາງ.

**2. ວິທີການເຜີຍແຜ່: ໃນເວລາຈັດຕັ້ງເຜີຍແຜ່ ໃຫ້ປະຕິບັດວິທີການດັ່ງນີ້:**

1) ກ່າວຈຸດປະສົງ;

2) ການຈັດຕັ້ງກ່ຽວຂ້ອງ (ບ່ອນລົງພົບປະ) ລາຍງານໂດຍສັງເຂບ;

3) ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ສະເໜີເນື້ອໃນການໂຄສະນາເຜີຍແຜ່;

4) ຮັບຟັງຄຳຄິດເຫັນ, ຄຳສະເໜີ ຂອງເປົ້າໝາຍທີ່ເຂົ້າຮ່ວມ;

5) ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຫຼື ອົງການທີ່ກ່ຽວຂ້ອງມີເຫັນອະທິບາຍຊີ້ແຈງ ຫຼື ປຶກສາຫາລືວິທີທາງແກ້ໄຂ;

6) ກ່າວສະຫຼຸບໂດຍຫຍໍ້.

ການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ນີ້, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ຕ້ອງເປັນເຈົ້າການສົມທົບກັບພາກສ່ວນກ່ຽວຂ້ອງໃນການປຸກລະດົມບັນດາເປົ້າໝາຍເຂົ້າຮ່ວມຢ່າງເປັນຂະບວນການ, ເອົາໃຈໃສ່ເຊື່ອມຊຶມ ແລະ ປະກອບສ່ວນຈັດຕັ້ງຜັນຂະຫຍາຍຜົນສຳເລັດກອງປະຊຸມ, ແນວທາງນະໂຍບາຍຂອງພັກ, ການປະຕິບັດວາລະແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ອື່ນໆ ແນໃສ່ແກ້ໄຂຄວາມທຸກຍາກເທື່ອລະກ້າວ. ພາຍຫຼັງສຳເລັດໃຫ້ສະຫຼຸບສັງລວມ ລາຍງານຕໍ່ເຂດເລືອກຕັ້ງ ແລະ ກົມກອງທີ່ຕົນສັງກັດ.

**3. ເປົ້າໝາຍການເຜີຍແຜ່:**

ເປົ້າໝາຍການເຂົ້າຮ່ວມຮັບຟັງການເຜີຍແຜ່ ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແມ່ນພະນັກງານ, ສະມາຊິກພັກ,ທະຫານ, ຕຳຫຼວດ, ນັກຮຽນ, ປັນຍາຊົນ ແລະ ປະຊາຊົນຜູ້ມີສິດເລືອກຕັ້ງ, ບັນດາອົງການຈັດຕັ້ງພັກ-ລັດ ຢູ່ສູນກາງ ແລະ ທ້ອງຖິ່ນຮາກຖານ.

**4. ກຳນົດເວລາ:**

ກຳນົດເວລາໃນການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແມ່ນເລີ່ມແຕ່ພາຍຫຼັງສຳເລັດກອງປະຊຸມ ຈົນທ້າຍເດືອນ ມີນາ 2023 ແລະ ສະຫຼຸບສັງລວມຜົນການເຜີຍແຜ່ລາຍງານເປັນລາຍລັກອັກສອນ ສົ່ງໃຫ້ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໃນຕົ້ນເດືອນ ເມສາ 2023 ເພື່ອສັງລວມລາຍງານຄະນະປະຈຳສະພາແຫ່ງຊາດ.

## V. <u>ມາດຕະການຈັດຕັ້ງປະຕິບັດ</u>

1. ຄະນະປະຈຳສະພາແຫ່ງຊາດ ເປັນເຈົ້າການຊີ້ນຳບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ, ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ສະມາຊິກສະພາແຫ່ງຊາດ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອເຮັດໃຫ້ການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ບັນລຸຕາມແຜນການທີ່ວາງໄວ້;

2. ບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍເນື້ອໃນກອງປະຊຸມຄັ້ງນີ້ ໃຫ້ເປັນແຜນວຽກງານອັນລະອຽດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ພ້ອມທັງສຸມໃສ່ຈັດຕັ້ງປະຕິບັດດ້ວຍຄວາມເປັນເຈົ້າການ;

3. ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ເປັນເຈົ້າການປະສານສົມທົບກັບ ພາກສ່ວນກ່ຽວຂ້ອງຂອງທ້ອງຖິ່ນ ເພື່ອຮັບປະກັນໃຫ້ການຈັດຕັ້ງເຜີຍແຜ່ ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ໄດ້ຢ່າງກ້ວາງຂວາງ, ທົ່ວເຖິງ, ສອດຄ່ອງ ແລະ ເໝາະສົມກັບແຕ່ລະເປົ້າໝາຍ ຕິດພັນກັບການເຄື່ອນໄຫວພົບປະປະຊາຊົນ ຕາມທີ່ກົດໝາຍໄດ້ກຳນົດໄວ້;

4. ຜ່ານການຈັດຕັ້ງຜັນຂະຫຍາຍຄຳແນະນຳສະບັບນີ້ ຫາກມີຂໍ້ຫຍຸ້ງຍາກ ຫຼື ມີບັນຫາໃດບໍ່ທັນຈະແຈ້ງ

ຕ້ອງຮີບຮ້ອນລາຍງານຄະນະປະຈຳສະພາແຫ່ງຊາດ, ຄະນະນຳຢູ່ທ້ອງຖິ່ນຕົນ ເພື່ອມີທິດຊີ້ນຳຢ່າງທັນການ;

5. ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ມອບໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຄະນະປະຈຳສະພາແຫ່ງຊາດ**

**ປະທານ**

ປອ ໄຊສົມພອນ ພົມວິຫານ